ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

Basic Education Quality and Access in Lao PDR




# CACIM Grade 5 Approval Media Report

## (26 Jan – 13 Feb 2023)


ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ

Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

# CACIM Grade 5 Approval
# Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-01-30 | Newspaper | Education, Sciences and Sports | Front and page 2 |
| 2023-01-30 | Newspaper | Pasaxon | Page 3 |
| 2023-01-31 | Newspaper | KPL Pathet Lao (Lao) | Front and page 2 |
| 2023-02-03 | Newspaper | Amy | Page 6 |
| 2023-02-03 | Newspaper | Public Security Newspaper | Page 5 |
| 2023-02-06 | Newspaper | Public Security Newspaper | Page 5 |
| 2023-02-06 | Newspaper | Vientiane Mai | Page 2 |
| 2023-01-26 | Social Media | Australia in Laos Facebook | 44K Followers |
| 2023-01-30 | Social Media | KPL Pathet Lao Facebook | 286K Followers |
| 2023-01-30 | Social Media | Lao Economic Daily Facebook | 502K Followers |
| 2023-02-01 | Social Media | Vientiane Mai Facebook | 41K Followers |
| 2023-02-01 | Social Media | Lao National Radio Facebook | 136K Followers |
| 2023-02-01 | Social Media | Lao PSTV Facebook | 155K Followers |
| 2023-02-02 | Social Media | Lao National Television-English News Program Facebook | 58K Followers |
| 2023-02-02 | Social Media | VTE 9 Channel Facebook | 126K Followers |
| 2023-02-03 | Social Media | Lao Star TV Facebook | 911K Followers |
| 2023-02-03 | Social Media | Edu-Sport TV Online Facebook | 63K Followers |
| 2023-02-06 | Social Media | Tetra Tech International Development Facebook | 34K Followers |
| 2023-02-06 | Social Media | Tetra Tech International Development LinkedIn | 53K Followers |
| 2023-01-30 | Website | KPL English Website | Read article here |
| 2023-01-30 | Website | Lao Economic Daily Website | Read article here |
| 2023-01-31 | Website | KPL Pathet Lao (Lao) Website | Read article here |
| 2023-02-01 | Website | Vientiane Mai Website | Read article here |
| 2023-02-13 | Website | BEQUAL Website | Read article in English here and in Lao here |
| 2023-02-01 | TV | Lao PSTV TV | Watch the news in Lao here |
| 2023-02-02 | TV | Lao National TV English program | Watch the news in English here |
| 2023-02-02 | TV | VTE 9 Channel TV | Watch the news in Lao here |
| 2023-02-03 | TV | Lao Star TV | Watch the news in Lao here |
| 2023-02-03 | TV | Edu-Sport TV | Watch the news in Lao here |
| 2023-02-08 | TV | Army TV | Watch the news in Lao here<br>At time 31:42 |

| | | | |
|---|---|---|---|
| 2023-01-30 | Radio | Lao Youth Radio<br>FM 90.00 MHZ | |
| 2023-01-31 | Radio | Public Security Radio<br>FM 101.5 | |
| 2023-01-31 | Radio | Army Radio<br>FM 99.7 | |
| 2023-02-06 | Radio | Lao National Radio<br>FM 103.7 | |
| 2023-02-06 | Radio | Vientiane Radio<br>FM 105.5 | |
| 2023-02-02 | WhatsApp | MT-PT WhatsApp and FB groups | 19 groups<br>+/- 660 members<br>Link to the Lao article posted on the website. |
| 2023-02-02 | WhatsApp | PESS-DESB | 18 Provincial groups<br>452 members<br>Link to the Lao article posted on the website. |
| 2023-02-02 | WhatsApp | ETSP | 3 groups<br>98 members<br>Link to the Lao article posted on the website. |
| 2023-02-02 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members<br>Link to the Lao article posted on the website. |

# Media Clipping

| | | | |
|---|---|---|---|
| 2023-01-30 | Newspaper | Education, Sciences and Sports | Front and page 2 |



ຄູ່ມືຄູ ປ.5 ສະບັບປັບປຸງໃໝ່

● ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດກອງປະຊຸມກວດຜ່ານ ແລະ ຮັບຮອງເນື້ອໃນຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາ ປີທີ 5, ຊຶ່ງປີນີ້ເປັນປີສຸດທ້າຍ ຂອງຄວາມພະຍາຍາມປັບປຸງຫຼັກສູດຊັ້ນປະຖົມສຶກສາ ຫຼັງຈາກທີ່ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດນັບແຕ່ປີ 2015 ໂດຍການສະໜັບສະໜູນ ຈາກລັດຖະບານອົດສະຕຣາລີ ຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ (BEQUAL/ບີຄວາ) ໃນ ສປປ ລາວ.

ອ່ານຕໍ່ໜ້າ 2



| 2023-02-03 | Newspaper | Amy | Page 6 |
|---|---|---|---|

❖ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາໄດ້ຈັດກອງປະຊຸມກວດຜ່ານ ແລະ ຮັບຮອງເນື້ອໃນຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາ ປີທີ 5, ເຊິ່ງປີນີ້ ເປັນປີສຸດທ້າຍຂອງຄວາມພະຍາຍາມປັບປຸງຫຼັກສູດ ຊັ້ນປະຖົມສຶກສາ ຫຼັງຈາກທີ່ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດນັບແຕ່ປີ 2015, ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ບີຄວາ ໃນ ສປປ ລາວ.

ກອງປະຊຸມດັ່ງກ່າວ, ໄດ້ຈັດຂຶ້ນໃນວັນທີ 25 ມັງກອນ 2023 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ ນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແລະ ທ່ານ ແດນ ເຮວເດິນ ຮອງເອກອັກຄະລັດຖະທູດ ອົດສະຕຣາລີ ປະຈຳ ສປປ ລາວ, ມີ ທ່ານ ປອ ອ່ອນແກ້ວ ນວນນະວົງ ຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ພ້ອມດ້ວຍບັນດາຄະນະອຳນວຍການສະຖາບັນ, ຄະນະກົມ, ຄະນະບໍດີ, ຄະນະກຳມະການກວດຜ່ານ ແລະ ຮັບຮອງຫຼັກສູດ, ຄະນະຊ່ຽວຊານ, ຄະນະຮັບຜິດຊອບແຜນງານບີຄວາ ແລະ ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ປອ ນາງ ສີສຸກ ວົງວິຈິດ ໄດ້ກ່າວວ່າ: ນັບແຕ່ປີ 2015 ເປັນຕົ້ນມາ, ກະຊວງສຶກສາທິການ ແລະ ກິລາໄດ້ມີການປັບປຸງຫຼັກສູດໃໝ່ໃນຂອບເຂດທົ່ວປະເທດ ພ້ອມກັບອຸປະກອນການຮຽນ-ການສອນແບບໃໝ່ໃຫ້ແກ່ນັກຮຽນ ແລະ



ຄູ. ສຳລັບຈຸດປະສົງຂອງກອງປະຊຸມຄັ້ງນີ້, ແມ່ນເພື່ອກວດ ແລະ ຮັບຮອງຕົ້ນສະບັບປຶ້ມແບບຮຽນ ແລະ ຄູ່ມືຄູ ປ5 ທີ່ຈະຈັດພິມແຈກຢາຍໃຫ້ບັນດາໂຮງຮຽນປະຖົມ ທົ່ວ ໝົດໃນ ສປປ ລາວ ໃນສົກຮຽນ 2023-2024. ປີ ເປັນຂີດໝາຍອັນສຳຄັນ ເພາະວ່າເປັນປີສຸດທ້າຍຂອງການປັບປຸງຫຼັກສູດຂັ້ນປະຖົມ. ການສຳເລັດຫຼັກສູດຂັ້ນ ປ5 ເປັນໜຶ່ງໃນຜົນສຳເລັດອັນສຳຄັນທີ່ສະແດງໃຫ້ເຫັນເຖິງຜົນສຳເລັດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ 9 ກໍຄືຜົນໄດ້ຮັບໄລຍະກາງ ໂດຍການປັບປຸງ ແລະ ການຈັດຕັ້ງປະຕິບັດເພື່ອໃຫ້ໄດ້ຫຼັກສູດທີ່ມີຄວາມເໝາະສົມສຳລັບເດັກທຸກຄົນ.

ສຳລັບຂັ້ນ ປ5, ລັດຖະບານອົດສະຕຣາລີ ໄດ້ສະໜັບສະໜູນການພັດທະນາຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ 3 ວິຊາຄື: ວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ວິຊາພາສາອັງກິດ, ພ້ອມທັງໄດ້ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູຈະໄດ້ແຈກຢາຍທົ່ວປະເທດພ້ອມຈະໄດ້ຊ່ວຍເຫຼືອໃນການເຝິກອົບຮົມຄູສອນວິຊາພາສາລາວ, ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ວິຊາພາສາອັງກິດ. ນອກຈາກນີ້, ຍັງໄດ້ໃຫ້ການສະໜັບສະໜູນວິຊາອື່ນໆອີກເຊັ່ນ: ການກວດຜ່ານຕົ້ນສະບັບບັນດາສື່ການຮຽນ-ການສອນ ແລະ ສ້າງຂີດຄວາມອາດສາມາດໃຫ້ນັກວິຊາການໃນການອອກແບບ ແລະ ການພິມເຂົ້າຫົວສື່ການຮຽນ-ການສອນ. ສ່ວນວິຊາຄຸນສົມບັດສຶກສາ, ສັງຄົມສຶກສາ, ພະລະສຶກສາ, ສິລະປະກຳ ແລະ ຫັດຖະກຳ, ສິລະປະດົນຕີ ແມ່ນລັດຖະບານ ສປປ ລາວ ໃຫ້ການສະໜັບສະໜູນ.

ທ່ານ ແດນ ເຮວເດິນ ໄດ້ກ່າວວ່າ: ອົດສະຕຣາລີ ມີຄວາມຍິນດີທີ່ໄດ້ຮ່ວມມືກັບສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ກະຊວງສຶກສາທິການ ແລະ ກິລາ ເພື່ອສະໜັບສະໜູນ



ການພັດທະນາຫຼັກສູດສະບັບປັບປຸງໃໝ່ ຂ້າພະເຈົ້າເຊື່ອວ່າ ພວກເຮົາທຸກຄົນມີຄວາມຕື່ນເຕັ້ນທີ່ຈະໄດ້ເຫັນສື່ການຮຽນການສອນໃໝ່ສຳລັບຊັ້ນປະຖົມປີສຸດທ້າຍຂອງນັກຮຽນທຸກຄົນໃນ ສປປ ລາວ ແລະ ຫວັງວ່າຈະໄດ້ເຫັນການປັບປຸງການຮຽນຮູ້ຂອງນັກຮຽນຊັ້ນປະຖົມດ້ວຍຫຼັກສູດໃໝ່ ແລະ ການຮຽນດ້ວຍການປະຕິບັດຕົວຈິງ.

ການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່ ໃນໂຮງຮຽນໄດ້ເລີ່ມແຕ່ເດືອນກັນຍາ 2019 ໂດຍເລີ່ມຕົ້ນຈາກຂັ້ນ ປ1 ແລະ ສຳເລັດ 1 ຂັ້ນຕໍ່ປີ ຄວາມແຕກຕ່າງອັນສຳຄັນໃນຫຼັກສູດໃໝ່ ແມ່ນວິທີການສອນແບບໃໝ່ ໂດຍເນັ້ນໃສ່ການຮຽນຮູ້ດ້ວຍການປະຕິບັດຕົວຈິງ, ເຊິ່ງເປັນວິທີການທີ່ຖືເອົານັກຮຽນເປັນໃຈກາງ. ການຮຽນຮູ້ດ້ວຍການປະຕິບັດຕົວຈິງ ເນັ້ນໃສ່ບົດບາດຂອງນັກຮຽນທີ່ໃຫ້ມີຄວາມຄິດຂອງຕົນໃນການຮຽນຮູ້ດ້ວຍຜົນສຳເລັດ ແລະ ນັກຮຽນຈະໄດ້ຮຽນຮູ້ ໂດຍຜ່ານການເຮັດກິດຈະກຳສະທ້ອນໃຫ້ເຫັນຄວາມຮູ້ໃໝ່ຂອງພວກເຂົາ ແລະ ນຳໃຊ້ທັກສະໃນຫ້ອງຮຽນ ແລະ ນອກຫ້ອງຮຽນ.

ສື່ການຮຽນການສອນແບບໃໝ່ໄດ້ຖືກອອກແບບ ເພື່ອສົ່ງເສີມການສອນແບບໃໝ່ ໂດຍຜ່ານການເຮັດກິດຈະກຳຕ່າງໆ ເພື່ອໃຫ້ນັກຮຽນສາມາດປະຕິບັດ, ເຝິກຝົນ ແລະ ນຳໃຊ້ຄວາມຮູ້ໃໝ່. ສື່ການຮຽນການສອນຂັ້ນ ປ5 ໃໝ່ ໄດ້ຖືກພັດທະນາຂຶ້ນຢ່າງເອົາໃຈໃສ່ ເພື່ອໃຫ້ສອດຄ່ອງກັບສື່ການຮຽນການສອນໃນຂັ້ນຮຽນກ່ອນນັ້ນ. ສື່ການສອນໃໝ່ນີ້, ຈະມີເນື້ອໃນໃໝ່ ແລະ ມີການຂະຫຍາຍເນື້ອໃນບົດຮຽນ ແລະ ຫົວຂໍ້ທີ່ຈະກວມເອົາໃນຂັ້ນ ປ4 ເພື່ອເສີມສ້າງຄວາມຮູ້ ແລະ ທັກສະຂອງນັກຮຽນ ພ້ອມທັງສົ່ງເສີມຄວາມກ້າວໜ້າໃນການຮຽນຂອງນັກຮຽນ ໃນຫົວຂໍ້ທີ່ສຳຄັນໃນແຕ່ລະວິຊາຈາກຂັ້ນຮຽນໜຶ່ງໄປຫາອີກຂັ້ນໜຶ່ງ.

| 2023-01-26 | Australia in Laos - Facebook |
| --- | --- |

Australia in Laos
January 26 ·

Curriculum for the last primary grade being approved this week to be ready for classrooms in the new school year!

ທ່ານ ແດນ ເຮວເດິນ, ຮອງເອກອັກຄະລັດຖະທູດອົດສະຕຣາລີ, ຮ່ວມກັບ ທ່ານ ປອ ນາງ ສີສຸກ ວົງວິຈິດ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ສະແດງຄວາມຍິນດີກັບ ທີມພັດທະນາຫຼັກສູດ ຂອງ ກະຊວງສຶກສາທິການ ແລະ ກິລາ ທີ່ໄດ້ເຮັດວຽກຢ່າງບໍ່ຮູ້ອິດຮູ້ເມື່ອຍເພື່ອສຳເລັດ ການພັດທະນາສື່ການຮຽນ-ການສອນ ສຳລັບຫຼັກສູດຊັ້ນປະຖົມສຶກສາ ປີທີ 5, ເຊິ່ງຈະຖືກທົບທວນ ແລະ ອະນຸມັດ ໃນອາທິດນີ້. ທ່ານ ເຮວເດິນ ກ່າວວ່າ ທ່ານ ຮູ້ສຶກຕື່ນເຕັ້ນທີ່ນັກຮຽນລາວທົ່ວປະເທດຈະໄດ້ນຳໃຊ້ສື່ການຮຽນການສອນໃໝ່ຂອງຂັ້ນຮຽນສຸດທ້າຍຂອງຊັ້ນປະຖົມໃນສົກຮຽນທີ່ຈະມາເຖິງນີ້.

ອົດສະຕຣາລີ ມີຄວາມພູມໃຈທີ່ໄດ້ເປັນຄູ່ຮ່ວມງານໃນການສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ ນັບແຕ່ປີ 2018 ເພື່ອພັດທະນາ, ຜະລິດ ແລະ ແຈກຢາຍ ສື່ການຮຽນການສອນຂອງທຸກຂັ້ນຮຽນໃນຊັ້ນປະຖົມສຶກສາ ພ້ອມທັງການຝຶກອົບຮົມຄູໃນການນຳໃຊ້ຫຼັກສູດຂອງວິຊາຫຼັກໃນຊັ້ນປະຖົມ. ສື່ການຮຽນການສອນຂອງຫຼັກສູດໃໝ່ຈະຊ່ວຍປະກອບສ່ວນເຂົ້າໃນການປັບປຸງຜົນການຮຽນຂອງເດັກຍິງ ແລະ ເດັກຊາຍ ໃນ ສສປ ລາວ.

Mr Dan Heldon, the Deputy Australian Ambassador, joined by Dr Sisouk Vongvichit, Vice Minister of Education and Sports congratulates the Ministry of Education and Sports curriculum development teams who have worked tirelessly to complete the Grade 5 curriculum materials which will be reviewed and approved this week. Mr Heldon said he was excited for the new materials of the last primary grade to be in schools for all Lao children in this school year.

Australia is proud to be partnering with the Ministry since 2018 for the development, production and distribution of all grades of primary curriculum materials, and training of teachers for key subjects of the curriculum. The new materials will contribute to improving the learning outcomes of Lao girls and boys.

Read more about Australia's support to the Ministry of Education and Sports at http://www.bequal-laos.org/

#BuildingLaoLearners, #BuidlingLaosFutureTogether



| 2023-01-30 | KPL Pathet Lao - Facebook |
| --- | --- |

ປະເທດລາວ Pathedlao
38m ·

ກະຊວງສຶກສາທິການ ແລະ ກິລາ ອະນຸມັດ
ປຶ້ມແບບຮຽນ ປ5 ແລະ ຄູ່ມືຄູ ສະບັບປັບປຸງໃໝ່

ຂປລ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ ຈັດກອງປະຊຸມກວດຜ່ານ ແລະ ຮັບຮອງເນື້ອໃນຫລັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາ ປີທີ 5, ຊຶ່ງປີນີ້ເປັນປີສຸດທ້າຍຂອງຄວາມພະຍາຍາມປັບປຸງຫລັກສູດ ຊັ້ນປະຖົມສຶກສາ ຫລັງຈາກທີ່ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດນັບແຕ່ ປີ 2015 ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍ ໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ (BEQUAL/ບີຄວາ) ໃນສປປ ລາວ.
ກອງປະຊຸມດັ່ງກ່າວພາຍໃຕ້ການເປັນປະທານຂອງ ທ່ານນາງ ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ແລະ ທ່ານ ແດນ ເຮວເດິນ ຮອງເອກອັກຄະລັດຖະທູດ ອົດສະຕຣາລີ ປະຈຳລາວ, ມີ ທ່ານ ຄອນແກ້ວ ນວນນະວົງ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ, ພ້ອມດ້ວຍບັນດາຄະນະອຳນວຍການສະຖາບັນ, ຄະນະກົມ, ຄະນະບໍດີ, ຄະນະກຳມະການກວດຜ່ານ ແລະ ຮັບຮອງຫລັກສູດ, ຄະນະຊ່ຽວຊານ, ຄະນະຮັບຜິດຊອບແຜນງານບີຄວາ ແລະ ຕາງໜ້າຈາກ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.
ທ່ານ ນາງ ສີສຸກ ວົງວິຈິດ ໄດ້ກ່າວວ່າ: ຈຸດປະສົງຂອງ ກອງປະຊຸມຄັ້ງນີ້, ເພື່ອກວດ ແລະ ຮັບ ຮອງຕົ້ນສະບັບປຶ້ມແບບຮຽນ ແລະ ຄູ່ມືຄູ ປ5 ທີ່ຈະຈັດພິມແຈກຢາຍໃຫ້ບັນດາໂຮງຮຽນປະຖົມທົ່ວໝົດໃນ ສປປ ລາວ ໃນສົກຮຽນ 2023-2024, ນີ້ເປັນຂີດໝາຍສຳຄັນ ເພາະວ່າເປັນປີສຸດທ້າຍຂອງການປັບປຸງຫຼັກສູດຂັ້ນປະຖົມ. ນັບແຕ່ປີ 2015 ເປັນຕົ້ນມາ, ກະຊວງສຶກສາທິການ ແລະ ກິລາ ໄດ້ມີການປັບປຸງຫລັກສູດໃໝ່ ໃນຂອບເຂດທົ່ວປະເທດ ພ້ອມກັບອຸປະກອນການ ຮຽນການສອນແບບໃໝ່ໃຫ້ແກ່ນັກຮຽນ ແລະ ຄູ.
ໂອກາດດຽວກັນ, ທ່ານ ແດນ ເຮວເດິນ ໄດ້ກ່າວວ່າ: ອົດສະຕຣາລີ ມີຄວາມຍິນດີທີ່ໄດ້ຮ່ວມມືກັບ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ກະຊວງ ສຶກສາທິການ ແລະ ກິລາ ເພື່ອສະໜັບສະໜູນການ ພັດທະນາຫລັກສູດສະບັບປັບປຸງໃໝ່, ຂ້າພະເຈົ້າເຊື່ອວ່າ ພວກເຮົາທຸກຄົນມີຄວາມຕື່ນ ເຕັ້ນທີ່ຈະໄດ້ເຫັນ ສື່ການຮຽນການສອນໃໝ່ສຳລັບຊັ້ນປະຖົມປີສຸດທ້າຍ ຂອງນັກຮຽນທຸກຄົນໃນ ສປປ ລາວ ແລະ ຫວັງວ່າຈະໄດ້ເຫັນການປັບປຸງ ການຮຽນຮູ້ຂອງນັກຮຽນຊັ້ນປະຖົມ ດ້ວຍຫລັກສູດ ໃໝ່ ແລະ ການຮຽນດ້ວຍການປະຕິບັດຕົວຈິງ.
ສຳລັບ ຊັ້ນ ປ5, ລັດຖະບານອົດສະຕຣາລີ ໄດ້ສະໜັບສະໜູນການພັດທະນາຫລັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ 3 ວິຊາ ຄື: ວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ວິຊາພາ ສາອັງກິດ, ພ້ອມທັງໄດ້ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູ ຈະໄດ້ແຈກຢາຍທົ່ວປະເທດພ້ອມ ຈະໄດ້ຊ່ວຍເຫລືອໃນການຝຶກອົບຮົມຄູສອນວິຊາພາສາລາວ, ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ວິຊາພາສາອັງກິດ. ນອກຈາກນີ້, ຍັງໄດ້ໃຫ້ການສະໜັບສະໜູນວິຊາອື່ນໆອີກເຊັ່ນ: ການກວດ ຜ່ານຕົ້ນສະບັບບັນດາສື່ການຮຽນ ການສອນ ແລະ ສ້າງຂີດຄວາມອາດສາມາດໃຫ້ນັກວິຊາການ ໃນການອອກແບບ ແລະ ການພິມເຂົ້າໜ້າສື່ການຮຽນ-ການສອນ. ສ່ວນວິຊາຄຸນສົມບັດສຶກສາ, ສັງຄົມສຶກສາ, ພະລະສຶກສາ, ສິລະປະກຳ ແລະ ຫັດຖະກຳ, ສິລະປະດົນຕີ ແມ່ນລັດຖະບານ ສປປ ລາວ ໃຫ້ການສະໜັບສະໜູນ.
ການຈັດຕັ້ງປະຕິບັດຫລັກສູດ ຊັ້ນປະຖົມສະບັບປັບປຸງໃໝ່ ໃນໂຮງຮຽນ ໄດ້ເລີ່ມແຕ່ເດືອນ ກັນຍາ 2019 ໂດຍເລີ່ມຕົ້ນ ຈາກຊັ້ນ ປ1 ແລະ ສຳເລັດ 1 ຊັ້ນຕໍ່ປີ ຄວາມແຕກຕ່າງອັນສຳຄັນໃນຫລັກສູດໃໝ່ ແມ່ນວິທີການສອນແບບໃໝ່ ໂດຍ ເນັ້ນໃສ່ການຮຽນຮູ້ດ້ວຍການປະຕິບັດຕົວຈິງ, ຊຶ່ງເປັນວິທີການທີ່ຖືເອົານັກຮຽນເປັນໃຈກາງ.
ຂ່າວ-ພາບ: ສຸກທະວີ



| 2023-01-30 | Lao Economic Daily - Facebook and Website |
|---|---|

ຂ່າວເສດຖະກິດ-ການຄ້າ Lao Economic Daily
January 30 at 3:59 PM ·

ກະຊວງສຶກສາທິການ ແລະ ກິລາ ອະນຸມັດປຶ້ມແບບຮຽນ ປ.5 ແລະ ຄູ່ມືຄູ ສະບັບປັບປຸງໃໝ່




LAOEDAILY.COM.LA

ກະຊວງສຶກສາທິການ ແລະ ກິລາ ອະນຸມັດປຶ້ມແບບຮຽນ ປ.5 ແລະ ຄູ່ມືຄູ ສະບັບປັບປຸງໃໝ່ - Actionpro

| 2023-02-01 | Vientiane Mai - Facebook and Website |
|---|---|

Vientiane Mai
57m ·

ສົກຮຽນ 2023-2024 ທົ່ວປະເທດຈະໄດ້ນຳໃຊ້ປຶ້ມແບບຮຽນຊັ້ນປ5 ສະບັບປັບປຸງໃໝ່
..........................................
ກອງປະຊຸມກວດຜ່ານ ແລະ ຮັບຮອງເນື້ອໃນຫຼັກສູດ ປຶ້ມແບບຮຽນ ແລະ ຄູ່ມືຄູຊັ້ນປະຖົມສຶກສາ ປີທີ5 ຈັດຂຶ້ນ ລະຫວ່າງວັນທີ 25-27 ມັງກອນ 2023 ຜ່ານມາ ທີ່ເຮືອນພັກຄູນຊັບ ເມືອງແກ້ວອຸດົມ ແຂວງວຽງຈັນ.........
#ກົດອ່ານເນື້ອໃນເພີ່ມເຕີມທີ່.............👇
https://v2.vientianemai.net/archives/54942
#VientianeMai



| 2023-02-01 | Lao National Radio - Facebook |
|---|---|

**Lao National Radio**
2 mins ·

ກະຊວງສຶກສາທິການ ແລະ ກິລາ
ຈັດກອງປະຊຸມກວດຜ່ານ ແລະ ຮັບຮອງເນື້ອໃນຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ
*****************

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກະຊວງສຶກສາທິການ ແລະ ກິລາ ໄດ້ຈັດກອງປະຊຸມກວດຜ່ານ ແລະ ຮັບຮອງເນື້ອໃນຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາ ປີທີ 5, ເຊິ່ງປີນີ້ເປັນປີສຸດທ້າຍໃນການປັບປຸງຫຼັກສູດຊັ້ນປະຖົມສຶກສາ ຫຼັງຈາກທີ່ໄດ້ເລີ່ມຕົ້ນຈັດຕັ້ງປະຕິບັດນັບແຕ່ປີ 2015 ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ (BEQUAL/ບີຄວາ)ໃນສປປ ລາວ.
ໂດຍພາຍໃຕ້ການເປັນປະທານຂອງທ່ານ ປອ.ນ. ສີສຸກ ວົງວິຈິດ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ແລະ ທ່ານ ແດນ ເຣວເດີນ ຮອງເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ, ມີທ່ານ ປອ ອ່ອນແກ້ວ ນວນນະວົງ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ພ້ອມດ້ວຍບັນດາຄະນະອຳນວຍການສະຖາບັນ, ຄະນະກົມ, ຄະນະບໍ່ດີ, ຄະນະກຳມະການກວດຜ່ານ ແລະ ຮັບຮອງຫຼັກສູດ, ຄະນະຊ່ຽວຊານ, ຄະນະຮັບຜິດຊອບແຜນງານບີຄວາ ແລະ ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.
ຈຸດປະສົງຂອງ ກອງປະຊຸມຄັ້ງນີ້, ແມ່ນເພື່ອ ກວດ ແລະ ຮັບຮອງຕົ້ນສະບັບປຶ້ມແບບຮຽນ ແລະ ຄູ່ມືຄູ ປ.5 ທີ່ຈະຈັດພິມແຈກຢາຍໃຫ້ບັນດາໂຮງຮຽນປະຖົມທັງໝົດໃນ ສປປ ລາວ ໃນສົກຮຽນ 2023-2024.
ທ່ານ ປອ.ນ. ສີສຸກ ວົງວິຈິດ ໄດ້ກ່າວວ່າ: ນັບແຕ່ປີ 2015 ເປັນຕົ້ນມາ ກະຊວງສຶກສາທິການ ແລະ ກິລາ ໄດ້ມີການປັບປຸງຫຼັກສູດໃໝ່ໃນຂອບເຂດທົ່ວປະເທດ ພ້ອມກັບອຸປະກອນການຮຽນການສອນແບບໃໝ່ໃຫ້ແກ່ນັກຮຽນ ແລະ ຄູ.
ສຳລັບຂັ້ນ ປ.5, ລັດຖະບານອົດສະຕຣາລີ ໄດ້ສະໜັບສະໜູນການພັດທະນາຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ 3 ວິຊາ ຄື: ວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ວິຊາພາສາອັງກິດ, ພ້ອມທັງໄດ້ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູ ຈະໄດ້ແຈກຢາຍທົ່ວປະເທດ ພ້ອມຈະໄດ້ຊ່ວຍເຫຼືອໃນການຝຶກອົບຮົມຄູສອນວິຊາພາສາລາວ, ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ວິຊາພາສາອັງກິດ. ນອກຈາກນີ້, ຍັງໄດ້ໃຫ້ການສະໜັບສະໜູນວິຊາອື່ນໆອີກ ເຊັ່ນ: ການກວດຜ່ານຕົ້ນສະບັບບັນດາສື່ການຮຽນການສອນ ແລະ ສ້າງຂີດຄວາມອາດສາມາດໃຫ້ນັກວິຊາການໃນການອອກແບບ ແລະ ການພິມເຂົ້າໜ້າສື່ການຮຽນການສອນ. ສ່ວນວິຊາຄຸນສົມບັດສຶກສາ, ສັງຄົມສຶກສາ, ພະລະສຶກສາ, ສິລະປະກຳ ແລະ ຫັດຖະກຳ, ສິລະປະດົນຕີ ແມ່ນລັດຖະບານ ສປປ ລາວ ໃຫ້ການສະໜັບສະໜູນ.
ໂອກາດດຽວກັນ, ທ່ານ ແດນ ເຣວເດີນ ໄດ້ກ່າວວ່າ: "ອົດສະຕຣາລີ ມີຄວາມຍິນດີທີ່ໄດ້ຮ່ວມມືກັບສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ແລະ ກະຊວງ ສຶກສາທິການ ແລະ ກິລາ ເພື່ອສະໜັບສະໜູນການພັດທະນາຫຼັກສູດສະບັບປັບປຸງໃໝ່ ຂ້າພະເຈົ້າເຊື່ອວ່າ ພວກເຮົາທຸກຄົນມີຄວາມຕື່ນເຕັ້ນທີ່ຈະໄດ້ເຫັນ ສື່ການຮຽນການສອນໃໝ່ສຳລັບຊັ້ນປະຖົມປີສຸດທ້າຍຂອງນັກຮຽນທຸກຄົນໃນ ສປປ ລາວ ແລະ ຫວັງວ່າຈະໄດ້ເຫັນການປັບປຸງການຮຽນຮູ້ຂອງນັກຮຽນຊັ້ນປະຖົມດ້ວຍຫຼັກສູດໃໝ່ ແລະ ການຮຽນດ້ວຍການປະຕິບັດຕົວຈິງ".
ກອງປະຊຸມໄດ້ດຳເນີນໄປເປັນໄລຍະ 3 ວັນ ( ວັນທີ 25-27 ມັງກອນ 2023 ), ດ້ວຍຜົນສຳເລັດຄື: ຄະນະກຳມະການກວດຜ່ານ ແລະ ຮັບຮອງຫຼັກສູດໄດ້ພິຈາລະນາ ແລະ ເຫັນດີເປັນເອກະພາບຮັບຮອງໃຫ້ຈັດພິມ ແລະ ນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ປ.5 ທັງໝົດ 8 ວິຊາ ລວມມີ 13 ຕົ້ນສະບັບ ໃນສົກຮຽນ 2023-2024 ທີ່ຈະມາເຖິງນີ້ ພ້ອມທັງໄດ້ໃຫ້ຄຳແນະນຳການປັບປຸງເນື້ອໃນປຶ້ມບາງຈຸດໃຫ້ມີຄວາມສົມບູນແກ່ຄະນະຮຽບຮຽງວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ, ຄຸນສົມບັດສຶກສາ, ສັງຄົມສຶກສາ. ຫຼັງຈາກນັ້ນ, ຄະນະຮຽບຮຽງກໍຈະໄດ້ປັບປຸງຕົ້ນສະບັບປຶ້ມແບບຮຽນ ແລະ ຄູ່ມືຄູ ປ.5 ດັ່ງກ່າວໃຫ້ມີຄວາມສົມບູນ ແລະ ພ້ອມທີ່ຈະສົ່ງໄປຈັດພິມໄດ້ໃນຕົ້ນເດືອນ 3 ປີ 2023 ນີ້.



| 2023-02-01 | Lao PSTV - Facebook and TV |
|---|---|




**LAO PSTV 1/2/2023 : ກະຊວງສຶກສາທິການ ແລະ ກິລາ ອະນຸມັດປຶ້ມແບບຮຽນ ປ.5 ແລະ ຄູ່ມືຄູ ສະບັບປັບປຸງໃໝ່ທີ່ໄດ້ຮັບການພັດທະນາ ໂດຍການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ**

ໂທລະພາບປ້ອງກັນຄວາມສະຫງົບ - laopstv
Yesterday at 9:15 AM ·
Following

Overview | Comments

LAO PSTV 1/2/2023 : ກະຊວງສຶກສາທິການ ແລະ ກິລາ ອະນຸມັດປຶ້ມແບບຮຽນ ປ.5 ແລະ ຄູ່ມືຄູ ສະບັບປັບປຸງໃໝ່ທີ່ໄດ້ຮັບການພັດທະນາ ໂດຍການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ

Be the first to leave a comment.

| 2023-02-02 | Lao National Television English News Program – Facebook and TV |
|---|---|



| | |
|---|---|
| 2023-02-02 | VTE 9 Channel – Facebook and TV |




| | |
|---|---|
| 2023-02-03 | Lao Star TV – Facebook and TV |




| | |
|---|---|
| 2023-02-03 | Edu-Sport TV Online – Facebook and TV |



| 2023-02-06 | Tetra Tech International Development – Facebook and LinkedIn |
|---|---|

Tetra Tech International Development Services
4h ·

The Research Institute of Educational Sciences of the Ministry of Education and Sports of Laos PDR held on 25th January the Committee for the Approval of Curriculum and Instructional Materials Meeting for Primary Education Grade 5.

The meeting was chaired by H.E. Dr. Sisouk Vongvichit, Vice Minister of Education and Sports and H.E. Dan Heldon, Deputy Head of Mission of the Australian Embassy in Laos.

For Grade 5, Australia supports the development, production, nationwide distribution, and training of teachers for Lao Language, Science and Environment and English subjects.

2023 is the last year developing the new primary curriculum that started in 2015 with the support of the Australian Government through the Basic Education Quality Access Laos (BEQUAL) Program. This brings a new pedagogical approach with a focus on active learning and a student-centred approach.

Read more here: https://www.bequal-laos.org/ministry-of-education-and.../

#BEQUAL #InclusiveEducation










